## ແມ່ຍິງ ກັບການປະສານງານເຮັດວຽກໃນທ້ອງຖິ່ນ



ນາງ ວົງຫວັນ ພົມວົງສາ, ອາຍຸ 25 ປີ, ພະນັກງານວິຊາການປູກຝັງຮັບຜິດຊອບຊີ້ນຳກຸ່ມບ້ານພັດທະນາທີ 2, ເບີໂທຕິດຕໍ່: 6275192 ຊຶ່ງປັດຈຸ ບັນຢູ່ບ້ານ ສົມບູນ, ເມືອງ ຊານໄຊ, ແຂວງ ອັດຕະປື, ຫາກໍ່ແຕ່ງງານປີນີ້.

ລະດັບວິຊາສະເພາະຊັ້ນກາງ, ເລີ່ມຕົ້ນເຮັດວຽກເດືອນ 10/2007 ອາສາສະໝັກໃນຂະແໜງປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ອັດຕະປື.

ເດືອນ 5/2008 ເຖິງປັດຈຸບັນປະຈຳທີ່ໜ່ວຍງານລ້ຽງສັດ, ຫ້ອງກະສິກຳແລະປ່າໄມ້ເມືອງ ຊານໄຊ ຊຶ່ງລົງຮັບຜິດຊອບກຸ່ມບ້ານພັດທະນາຂອງເມືອງ. ປັດຈຸບັນຍັງເປັນພະນັກງານອາສາສະໝັກຂອງຫ້ອງການ.

ຄວາມຮັບຜິດຊອບໃນການ**ແນະນຳເຕັກນິກໃນການປູກ, ບົວລະບັດຮັກສາ ແລະ ເກັບກ່ຽວເຂົ້ານາປີແລະພືດໄລຍະສັ້ນ**, ອີກທັງ**ເກັບກຳສະຖິຕິຂອງຜົນຜະລິດຂອງປະຊາຊົນ**ໃນກຸ່ມບ້ານທີ່ຮັບຜິດຊອບ **ສົ່ງເສີມການປູກພືດສະບຽງອາຫານເພື່ອກາຍເປັນສິນຄ້າ**, ພ້ອມນັ້ນກໍ່ຍັງ**ເຮັດວຽກການປະສານງານກັບທ້ອງຖິ່ນ**ເຊັ່ນ: ສ້າງຄວາມເຂົ້າໃຈໃຫ້ກັບຊາວບ້ານກ່ອນເຕົ້າລວມປະຊຸມ, ແຈ້ງການກຸ່ມບ້ານເຕົ້າລວມພົນໂດຍສະເພາະກຸ່ມບ້ານທີ່ຮັບຜິດຊອບນັ້ນເພື່ອຊ່ວຍໜ່ວຍງານອື່ນໆທີ່ລົງເຮັດວຽກໃນກຸ່ມບ້ານ.

### ປັດໃຈເອື້ອອຳນວຍການປະຕິບັດຂອງຜູ້ກ່ຽວໄດ້ດີ:



- ພາຍໃນຕົນເອງ: ຄວາມເຊື່ອໝັ້ນໃນຕົວເອງແລະມີຄວາມໜັກແໜ້ນໃນຫຼັກວິຊາການ ຈຶ່ງເຮັດໃຫ້ຕົນເອງປະຕິບັດວຽກງານໄດ້ຮັບຜົນສຳເລັດຈົນເຖິງປັດຈຸບັນນີ້.
- ການຈັດຕັ້ງຂັ້ນເມືອງ, ແຂວງ: ໄດ້ອຳນວຍຄວາມສະດວກດ້ານພາຫະນະ, ນ້ຳມັນ ແລະ ອັດຕາກິນສຳລັບ ພະນັກງານທີ່ລົງປະຈຳກຸ່ມບ້ານ. ອີກຢ່າງນຶ່ງຫາກວ່າພະນັກງານທີ່ເປັນຄົນທ້ອງຖິ່ນນີ້ຍິ່ງຈະໄດ້ຮັບຄວາມໄວ້ ວາງໃຈຫຼາຍກວ່າເກົ່າເພື່ອຫຼໍ່ຫຼອມເປັນພະນັກງານທີ່ສົມບູນ.

- ຄອບຄົວ: ຊຸກຍູ້ໃນການເຮັດວຽກຕົວຈິງຂອງເມຍ.
- ຜູ້ຮ່ວມງານ: ເປັນຜູ້ທີ່ຄຽງບ່າຄຽງໄລ່ການເຮັດວຽກຮ່ວມກັບພະນັກງານຊາຍອື່ນໆ
- ເປັນຜູ້ທີ່ເຮັດວຽກປະຈຳຊຸມຊົນ ສາມາດນຳພາປະຊາຊົນໃນການປະຕິບັດປູກຝັງເພື່ອເປັນສິນ ຄ້າສາມາດເປັນຕົວແບບຂອງການຜະລິດກຸ່ມບ້ານພັດທະນາ ເຂດນ້ຳປາ ເມືອງ ຊານໄຊ
- ການປະຕິບັດຄຸນສົມບັດ ແລະ ລະບຽບຂອງລັດຖະກອນໄດ້ດີ

**ຄວາມຄາດຫວັງໃນອະນາຄົດແມ່ນຫວັງໄວ້ວ່າ** ຈະສາມາດເຂົ້າເປັນພະນັກງານ**ລັດຖະກອນສົມບູນ** ແລະ **ສ້າງຕົນໃຫ້ກາຍເປັນວິຊາການທີ່ເກັ່ງຮອບດ້ານໃນວິຊາການປູກຝັງ**ທີ່ປະຊາຊົນໃຫ້ຄວາມໄວ້ວາງໃຈຍິ່ງໆຂຶ້ນ.

# ແມ່ຍິງ ສາມາດເຮັດວຽກເຂດຫ່າງໄກ



ນາງ ລິນວິດາ ສິມພະວັດ, ອາຍຸ 27 ປີ, ວິຊາການລ້ຽງສັດ, ໜ່ວຍງານລ້ຽງສັດ, ຫ້ອງການກະສິກຳ-ປ່າໄມ້ເມືອງ ທ່າແຕງ ເບີໂທຕິດຕໍ່: 5266854 ປັດຈຸບັນຢູ່ບ້ານ ທ່າແຕງເໜືອ ເມືອງ ທ່າແຕງ, ແຂວງ ເຊກອງ. ອາໄສຢູ່ນຳພີ່ນ້ອງ ຍັງເປັນໂສດ.

ລະດັບວິຊາສະເພາະລ້ຽງສັດຊັ້ນກາງ, ເລີ່ມຕົ້ນເຮັດວຽກຕັ້ງແຕ່ປີ 2005-2006 ເປັນອາສາສະໝັກໜ່ວຍງານລ້ຽງສັດ, ເດືອນ ມີນາ 2006 ເປັນປະສານງານ ໃຫ້ກັບໂຄງການ ລີບ, ປີ 2009 ເຖິງປັດຈຸບັນເປັນ ປະສານງານໃຫ້ກັບ ອົງການ ແຄສາກົນ, ຮັບຜິດຊອບເປັນ ຄູຝຶກດ້ານສັດຕະວະແພດ. ໄດ້ຮັບການບັນຈຸເປັນລັດຖະກອນ 2 ປີຜ່ານມາ.

ຄວາມຮັບຜິດຊອບທາງວິຊາສະເພາະເຊັ່ນ: ຄູຝຶກເຜີຍແຜ່ການລ້ຽງສັດໃຫຍ່ນ້ອຍ, ການສັກຢາປ້ອງກັນພະຍາດໃຫ້ສັດແກ່ ອສບ ບ້ານ, ການລາຍງານຜົນການຈັດຕັ້ງປະຕິບັດກິດຈະກຳ ແລະ ສະຫຼຸບຜົນປະຈຳເດືອນຂອງການສັກຢາປ້ອງກັນພະຍາດ ສັດລ້ຽງຂອງເມືອງ, ຮ່ວມເປັນທີມງານຝຶກອົບຮົມ ແລະ ຕິດຕາມຜົນຂອງການຝຶກອົບຮົມໃຫ້ກັບປະຊາຊົນບ້ານກຸ່ມເປົ້າໝາຍ ຮັບຜິດຊອບງົບປະມານແລະບັນຊີຂອງກິດຈະກຳທີ່ສະໜັບສະໜູນໂດຍອົງການ ລີບ, ນອກຈາກນີ້ກໍ່ຍັງມີສ່ວນຮັບຜິດຊອບ ໃນວຽກງານບໍລິຫານຂອງຫ້ອງການເຊັ່ນ: ພິມເອກະສານແລະແລ່ນເອກະສານຂອງຫ້ອງການ.

ການເຮັດວຽກໃນພື້ນທີ່ຕົວຈິງ: ພື້ນທີ່ການເຮັດວຽກຕົວຈິງແມ່ນໃນຂອບເຂດ 6 ກຸ່ມບ້ານພັດທະນາຂອງເມືອງ. ຝຶກແລະໃຫ້ ຄຳແນະນຳກ່ຽວກັບການປ້ອງກັນພະຍາດສັດເຊັ່ນ: ການແຍກສັດປ່ວຍແລະບໍ່ປ່ວຍ, ການສັກຢາ, ອອກລະບຽບການຮັກສາສັດ ແລະການຝັງສັດທີ່ຕາຍ ການຕິດຕາມສະພາບການລະບາດຂອງພະຍາດສັດລ້ຽງໃນບ້ານ. ເປັນຝຶກຮ່ວມກັນໃນທີມງານແລະ ບາງຄັ້ງຕ້ອງເປັນຄູ ຝຶກດ່ຽວເມື່ອຈຳເປັນຕ້ອງແຍກທີມເພື່ອປະຕິບັດ. ເຂດທີ່ລົງປະຕິບັດວຽກສ່ວນຫຼາຍແມ່ນໄກຈາກຕົວເມືອງ ປະມານ 25 ກິໂລແມັດ.



## ປັດໃຈເອື້ອອຳນວຍການປະຕິບັດຂອງຜູ້ກ່ຽວໄດ້ດີ:

ພາຍໃນຕົນເອງ: ຄວາມດຸໝັ່ນຫ້າວຫັນຂອງຕົນເອງໃນການປະຕິບັດໜ້າທີ່ ທີ່ໄດ້ຮັບການມອບໝາຍ, ມີຄວາມມຸ່ງໝັ້ນຈຶ່ງເຮັດໃຫ້ໄດ້ຮັບຄວາມໄວ້ວາງໃຈຈາກ ການນຳຂອງຕົນດີຍິ່ງຂື້ນ.

ການຈັດຕັ້ງຂັ້ນເມືອງ, ແຂວງ: ຜ່ານມາຜູ້ກ່ຽວກໍ່ປະຕິບັດຕາມລະບຽບລັດຖະ ກອນໄດ້ດີທຽບໃສ່ຄົນອື່ນໆທີ່ເຮັດວຽກ ພ້ອມກັນ ດັ່ງນັ້ນທາງຫ້ອງການເອງກໍ່ໄດ້ໃຫ້ຄວາມສະດວກຫຼາຍຢ່າງແກ່ຜູ້ກ່ຽວເຊັ່ນ: ນະໂຍບາຍເງິນເພີ່ມສຳລັບບຸກຄົນເຮັດວຽກ ກ່ຽວຂ້ອງກັບສານເຄມີ, ມອບໝາຍໃຫ້ຮັບຜິດຊອບກວດກາຕິດຕາມການສັກຢາພະຍາດສັດລ້ຽງທົ່ວ 6 ກຸ່ມບ້ານໃນການແຈກ ຢາຍຢາແລະລາຍງານຜົນປະຕິບັດວຽກງານ, ພ້ອມນັ້ນກໍ່ຍັງອຳນວຍຄວາມສະດວກທາງອຸປະກອນ, ພາຫະນະ ແລະ ທົວໜ້າ ເອງກໍ່ໄດ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການລ້ຽງສັດແລະປູກຝັງໃຫ້ກັບບັນດາພະນັກງານໃນຫ້ອງການນຳອີກ.

ຄອບຄົວ: ຊຸກຍູ້ໃນການເຮັດວຽກຕົວຈິງ ແລະ ຍາດພີ່ນ້ອງກໍ່ສະໜັບສະໜູນ

**ຄວາມຄາດຫວັງໃນອະນາຄົດແມ່ນຫວັງໄວ້ວ່າ** ຈະເປັນຜູ້ໜຶ່ງທີ່ມີຄວາມຮູ້ຮອບດ້ານທາງວິຊາສະເພາະກ່ຽວກັບສັດລ້ຽງ ແລະ ພະຍາດສັດຈົນກາຍເປັນຊ່ຽວຊານດ້ານວິຊາການລ້ຽງສັດ ແລະ ພະຍາດສັດລ້ຽງທີ່ສັງຄົມຍອມຮັບ.

# ແມ່ຍິງ ກັບຄວາມກ້າຫານໃນການປະຕິບັດວຽກວິຊາການ



ນາງ ແກ້ວວິງມາ ລຸນປະຊາ, ອາຍຸ 40 ປີ, ວິຊາການປ່າໄມ້, ໜ່ວຍງານປ່າໄມ້, ຫ້ອງການກະສິກຳ-ປ່າໄມ້ເມືອງ, ເບີໂທຕິດຕໍ່: 5450242 ປັດຈຸບັນຢູ່ບ້ານ ຂົວເຊ, ເມືອງ ເຊບັ້ງໄຟ, ແຂວງ ຄຳມ່ວນ. ປັດຈຸບັນແຕ່ງງານແລ້ວ, ມີລູກ 4 ຄົນ, ຍິງ 1 ຄົນ, ຊາຍ 3 ຄົນ, ສາມີ ເປັນພະນັກງານ, ຮອງໜ່ວຍງານປ່າໄມ້ທີ່ຫ້ອງກະສິກຳ-ປ່າໄມ້ເມືອງ ເຊບັ້ງໄຟ, ສະພາບຄອບຄົວຢູ່ໃນລະດັບປານກາງ.

ວິຊາສະເພາະປ່າໄມ້ຂັ້ນກາງຕັ້ງແຕ່ປີ 1991-1992 ເປັນຕຳລວດປ່າໄມ້ສູນກາງ, ປີ 1992-1994 ເປັນພະນັກງານວິຊາ ການປ່າໄມ້ປະຈຳແຂວງ ຄຳມ່ວນ, ປີ 1994-2010 ປັດຈຸບັນພະນັກງານວິຊາການປ່າໄມ້ ປະຈຳເມືອງ ເຊບັ້ງໄຟເຄື່ອນໄຫວ ວິຊາສະເພາະແລະໄດ້ເຂົ້າຮ່ວມໂຄງການ LEAP ປີ 2006-2008. ນອກນັ້ນ ກໍ່ຍັງເປັນຜູ້ນຳໃນການສ້າງສາເສດຖະກິດຄອບ ຄົວ: ໂຮງສີເຂົ້າຮ້ານຂາຍເຄື່ອງຍ່ອຍ ແລະ ຟາມລ້ຽງໝູ.

ຮັບຜິດຊອບຝຶກອົບຮົມດ້ານເຕັກນິກວິທີການລ້ຽງສັດ, ໂດຍຮ່ວມກັບທີມງານສົ່ງເສີມຂັ້ນແຂວງຂອງ ໂຄງການລີບ. ຄູຝຶກການລ້ຽງໝູ, ແນະນຳສັງ, ເກດອາການ, ປິ່ນປົວພະຍາດໝູແລະການໄລ່ລຽງເສດຖະກິດ ໃນການລ້ຽງໝູໃຫ້ກັບຊາວໃນເມືອງ ເຊບັ້ງໄຟ ແລະ ຜູ້ເຮັດຟາມຜູ້ອື່ນໆໃນເຂດຕົວເມືອງ. ພ້ອມນັ້ນໄດ້ຮັບ ການມອບໝາຍດ້ານວິຊາການປ່າໄມ້ເຊັ່ນ: ປ່ອຍໄມ້ທີ່ໂຮງເລື່ອຍເຂດເມືອງສຳຫຼວດໄມ້ປຸກສ້າງແລະຕີກາໄມ້ສະໜາມ 2.

ໄດ້ຮັບ**ການແຕ່ງຕັ້ງຈາກການຈັດຕັ້ງຂອງຫ້ອງການໃນການປະຕິບັດວິຊາສະເພາະປ່າໄມ້**ພ້ອມນັ້ນກໍ່ໄດ້ຮັບ**ຄວາມໄວ້ວາງໃຈໃນການປະຕິບັດວຽກງານກ່ຽວກັບການລ້ຽງໝູ** ອັນເນື່ອງມາຈາກການປະຕິບັດຕົວຈິງໃນການລ້ຽງໝູພາຍໃນຄອບຄົວ. ພ້ອມນັ້ນກໍ່ຍັງຮັບຜິດຊອບແຜນງົບປະມານ, ການສະຫຼຸບງົບປະມານ, ບັນທຶກກອງ ປະຊຸມຂັ້ນບ້ານ ແລະ ດຳເນີນກອງປະຊຸມ.

## ປັດໃຈເອື້ອອຳນວຍການປະຕິບັດຂອງຜູ້ກ່ຽວໄດ້ດີ:



**ພາຍໃນຕົນເອງ:** ຍ້ອນວ່າມີປະສົບການໃນການປະຕິບັດຕົວຈິງຂອງຕົນ, ສາມາດຕັດສິນໃຈດຳເນີນທຸລະກິດຄອບຄົວຈົນກາຍເປັນພະນັກງານດີເດັ່ນດ້ານການລ້ຽງໝູ ເຖິງແມ້ວິຊາການຈະເປັນປ່າໄມ້ກໍ່ຕາມ, ອີກທັງໄດ້ຮັບການຍ້ອງຍໍໃຫ້ເປັນຕົວແບບຂອງການລ້ຽງໝູຂອງເມືອງ.

**ການຈັດຕັ້ງຂັ້ນເມືອງ, ແຂວງ:** ອີງຕາມບຸກຄະລິກສະເພາະຕົວຂອງພະນັກງານ, ຄວາມສາມາດ ແລະ ການສະນັບສະໜູນ ແລະ ໂອກາດທີ່ເທົ່າທຽມກັນກັບພະນັກງານທຸກຄົນ, ພ້ອມນັ້ນກໍ່ຖາມຄວາມສະໝັກໃຈຂອງພະນັກງານກ່ອນມອບໝາຍວຽກໃຫ້.

**ຄອບຄົວ:** ກໍ່ໃຫ້ຄວາມຊຸກຍູ້ການເຮັດວຽກວິຊາສະເພາະ, ການສ້າງເສດຖະກິດຄອບຄົວ ແລະ ໃຫ້ອຳນາດການຕັດສິນໃຈໃນດ້ານການເຮັດວິຊາສະເພາະ ແລະ ການສ້າງເສດຖະກິດຄອບຄົວ.

**ຄວາມຄາດຫວັງໃນອະນາຄົດແມ່ນຫວັງໄວ້ວ່າ** ສາມາດໄດ້ຮັບການປັບປຸງລະດັບວິຊາສະເພາະໃນການລ້ຽງສັດ ແລະ ກ້າວໄປເຖິງເປັນຜູ້ຊ່ຽວຊານກ່ຽວກັບເຕັກນິກການລ້ຽງ, ປິ່ນປົວໝູ ເພື່ອການດຳເນີນວຽກວິຊາການໃຫ້ດີຂື້ນ ແລະ ສາມາດເປັນສູນໃຫ້ຄຳແນະນຳ, ປຶກສາການລ້ຽງໝູ ພ້ອມທັງສາມາດເປັນເການນຳຟາມໝູໃນເມືອງນີ້.

## ແມ່ຍິງ ທີ່ມີຄວາມຮູ້ ແລະ ການສຶກສາສູງ



ນາງ ພອນສະຫວັນ ວິໄລວັນ ອາຍຸ 41 ປີ ຢູ່ບ້ານ ດອນເກົ່າ ເມືອງ ພະບາງ ແຂວງ ຫຼວງພະບາງ ໜ້າທີ່ຮັບຜິດຊອບເປັນຫົວໜ້າຈຸງານຄົ້ນຄ້ວາ ນຳໃຊ້ທີ່ດິນກະສິກຳປ່າໄມ້, ແຕ່ງງານແລ້ວມີລູກຊາຍ 3 ຄົນ ອາຊີບຜົວ ເປັນ ອາຈານສອນຢູ່ມະຫາວິທະຍາໄລສຸພານຸວົງ, ຕຳແໜ່ງ ຮອງຫົວໜ້າວິຊາຊັບ ພະຍາກອນນ້ຳ ໜ້າທີ່ຮັບຜິດຊອບສິ່ງເສີມຄົ້ນຄ້ວາປ່າໄມ້, ຖານະຄອບຄົວ ປານກາງ. ເບີໂທຕິດຕໍ່ 678 2948.

ປີ 1990-1992 ຮັບຜິດຊອບວຽກເລຂານຸການຢຸດຕິການຖາງປ່າເຮັດໄຮ່,ປີ1992-2000 ເຮັດວຽກກ່ຽວກັບການ ສຳຫຼວດປ່າ, ແຕ້ມແຜນທີ່, ວຽກບົດບາດຍິງ-ຊາຍ ແລະຫ້ອງສະໝຸດ, ປີ2000-2003 ຮຽນຕໍ່ກ່ຽວກັບປ່າໄມ້ທັງເຮັດວຽກ ຄົ້ນຄ້ວາ, ປີ2003-2010 ເປັນຫົວໜ້າຈຸງານຄົ້ນຄວ້ານຳໃຊ້ທີ່ດິນກະສິກຳ-ປ່າໄມ້.

ການປະຕິບັດວຽກກັບທ້ອງຖິ່ນໃນແຕ່ລະຂັ້ນ ລົງຊີ້ນຳການກຳນົດ ແລະ ແບ່ງເຂດນິເວດກະສິກຳປ່າໄມ້ພາກເໜືອ (ບໍ່ແກ້ວ, ອຸດົມໄຊ, ຫຼວງພະບາງ ແລະ ຊຽງຂວາງ) ແລະ ການສຳຫລວດດິນກຳສິກຳ (ເກັບຕົວຢ່າງດິນເພື່ອວິໄຈ) ໃນເຂດເມືອງ ເມິງ ແຂວງບໍ່ແກ້ວ, ອຸດົມໄຊ ເປັນຕົ້ນ ຊຶ່ງການປະຕິບັດງານໃນພາກສະໜາມແມ່ນເຂດຫ່າງໄກ ແລະ ໃຊ້ເວລາປະຕິບັດງານບໍ່ຕ່ຳກວ່າ 2 ອາທິດ ຫາ 1 ເດືອນ ຈຶ່ງສຳເລັດຫຼັງຈາກນັ້ນກໍ່ວິເຄາະຂໍ້ມູນໃນພາກຫ້ອງການໂດຍ ການນຳໃຊ້ ໂປແກມການແຕ້ມແຜນທີ່. ນອກຈາກນີ້ວຽກວິຊາສະເພາະທີ່ຕົນຮັບຜິດຊອບແມ່ນຄຸ້ມຄອງປ່າສະຫງວນ ພູຈອມແງ ໃນການສຳຫຼວດຂອບເຂດ ປ່າສະຫງວນ, ສຳຫຼວດເຂດຖືກທຳລາຍຈາກປະຊາຊົນຖາງເພື່ອວາງແຜນການ ປູກໄມ້ທົດແທນຄືນທີ່ປ້ອງກັນການເຊາະເຈື່ອນ ແລະ ເພີ່ມຄວາມສົມບູນໃຫ້ກັບດິນເຂດດັ່ງກ່າວ.

## ປັດໃຈທີ່ເຮັດໃຫ້ການປະຕິບັດວຽກຜ່ານມາໄດ້ດີນັ້ນ



ພາຍໃນຕົວເອງ: ຕົນເອງມັກວຽກທີ່ຕົນເອງຮັບຜິດຊອບ, ການຈັດ ຕັ້ງມີຄວາມສຳຄັນທາງດ້ານວິຊາສະເພາະທີ່ຮຽນມາ, ການເອົາໃຈໃສ່ຂອງ ຕົນເອງຕໍ່ວຽກງານ

ຄອບຄົວ: ໃນຄອບຄົວລ້ຽງກົບຫຼາຍປະມານ 600 ໂຕ ເພື່ອຊ່ວຍ ອາຊີບຄອບຄົວ, ນອກຈາກນັ້ນຍັງໄດ້ລ້ຽງໄກ່ປະມານ 30 ໂຕ, ກຳລັງໃຈ ຂອງຜົວແມ່ນໄດ້ເອົາລູກຊ່ວຍໃນເວລາໄປພາກສະໜາມ, ໃຫ້ກຳລັງໃຈ ພ້ອມທັງຊຸກ ຍູ້ທຸກເວລາ.

ການຈັດຕັ້ງສູນຄົ້ນຄວ້າ: ມອບຄວາມຮັບຜິດຊອບເປັນຫົວໜ້າຈຸງານວາງແຜນນຳໃຊ້ທີ່ດິນກະສິກຳປ່າໄມ້, ຄຸ້ມຄອງ ອ້າຍນ້ອງຈຸງານ ແລະ ເຮັດວຽກປະສານງານກັບບັນດາໂຄງການທີ່ກ່ຽວຂອງເຊັ່ນ: TABEE, CIFO ແລະ URDP.

**ຄວາມຄາດຫວັງໃນອານາຄົດ** ຢາກຍົກລະດັບປະລິນຍາຕີດ້ານປ່າໄມ້ ຖ້າເປັນໄປໄດ້ແມ່ນຢາກຕໍ່ໂທ.

## ແມ່ຍິງ ຢູ່ໃນລະດັບຂັ້ນນຳຂອງໜ່ວຍງານ



ນ ຈັນສຸກ ຈັນທະນິນ ອາຍຸ 38 ປີ ຢູ່ບ້ານ ສົມສະໜຸກ ເມືອງປາກອູ ແຂວງຫຼວງພະບາງ ໜ້າທີ່ຮັບພິຊອບຫົວໜ້າ ໜ່ວຍງານປູກຝັງ, ໂສດ ຖານະຄອບຄົວປານກາງ ເບີໂທຕິດຕໍ່: 020 388 8054.

ປີ 1994-2001 ຮັບຜິດຊອບຊ່ວຍວຽກບໍລິຫານ, ປີ 2004-2008 ເຮັດວຽກກ່ຽວກັບການລ້ຽງສັດ, ປີ 2008-2010 ເປັນຫົວໜ້າໜ່ວຍງານປູກ ຝັງໄດ້ມີການຍົກລະດັບຄວາມສາມາດລະດັບທິດສະດີການເມືອງ.

ການລົງເຮັດວຽກກັບທ້ອງຖິ່ນໃນແຕ່ລະຂັ້ນປະງານກັບທາອຳນາດການປົກຄອງບ້ານ, ປະສານກັບກຸ່ມບ້ານ, ກຸ່ມເທດສະບານເມືອງປາກອູມີ 6 ບ້ານ ແລະ ກຸ່ມບ້ານພັດທະນາກຸ່ມທີ່5 ຂອງເມືອງ ໃນການສົ່ງເສີມການປູກເຂົ້າກັບດຽວໃນການນຳພາຝຶກອົບຮົມ, ຕິດຕາມ ແລະ ການໃຫ້ຄຳແນະນຳເຕັກນິກໃນການປູກເຂົ້າກັບດຽວຜ່ານມາສາມາດນຳພາປະຕິບັດໄດ້ 40 ເຮັກຕາໃນກຸ່ມບ້ານເທດສະບານ, ນອກນັ້ນກໍ່ແມ່ນການປັບປຸງລະບົບການລ້ຽງໝູໃຫ້ກັບກຸ່ມບ້ານພັດທະນາເຊັ່ນ: ການຮັກສາສຸຂະພາບສັດ, ການປັບປຸງຄອກ ແລະ ອາຫານ, ການລ້ຽງໝູທອມ ແລະ ການລ້ຽງໝູເພື່ອຜະລິດລູກຂາຍ ຊຶ່ງເປັນການຝຶກອົບຮົມກັບທີ່ ແລະ ສາທິດຕົວຈິງ. ວຽກງານການນຳພາຊີ້ນຳອ້າຍນ້ອງໃນໜ່ວຍງານ ໂດຍການວາງແຜນເດືອນ ແລະ ຕິດຕາມການລາຍງານປະຈຳອາທິດຂອງອ້າຍນ້ອງ ຈາກນັ້ນລາຍງານໃຫ້ກັບຫົວໜ້າຫ້ອງການ.

## ປັດໃຈເຮັດໃຫ້ການປະຕິບັດວຽກງານໄດ້ດີ



ພາຍໃນຕົວເອງ: ຕົວເອງມີຄວາມຕັດສິນໃຈສູງ, ບຸກບືນ

ຄອບຄົວ: ພໍ່ແມ່ໃຫ້ຄວາມສະດວກ, ຊຸກຍູ້ໃຫ້ກຳລັງໃຈ

ການຈັດຕັ້ງ: ອຳນວຍຄວາມສະດວກໃນການລົງປະຕິບັດງານ, ໃຫ້ທິດຊີ້ນຳການແກ້ໄຂບັນຫາ. ຫ້ອງການໄດ້ທຳການທົດສອບຄວາມອົດທົນຂອງແມ່ຍິງ ແລະ ຄວາມສາມາດ ຊຶ່ງເຫັນວ່າຜົນອອກມາໄດ້ທີ່ສຸດຕາມຄາດໝາຍທີ່ໄດ້ວາງໄວ້ໂດຍການວາງຕາຕະລາງຄາດໝາຍເວລາເປັນສິ່ງວັດແທກເຫັນວ່າແມ່ຍິງສຳເລັດຜົນໄວກວ່າໝູ່. ໃຫ້ຄວາມໄວ້ວາງໃຈ ມອບຄວາມຮັບຜິດຊອບນຳພາໜ່ວຍງານລ້ຽງສັດຂອງເມືອງ ແລະ ຈະພະຍາຍາມສົ່ງເສີມບົດບາດຂອງແມ່ຍິງໃຫ້ສູງຂຶ້ນໂດຍການສະໜັບສະໜູນການເຄື່ອນໄຫວດ້ານພັກ ຕື່ມອີກ.

**<u>ຄວາມຄາດຫວັງໃນອະນາຄົດ</u> ນັ້ນ**ຕົ້ນຕໍແມ່ນຕ້ອງຍົກລະດັບຄວາມຮູ້ຄວາມສາມາດດ້ານການປູກຝັງໃຫ້ສູງຂຶ້ນ.

# ແມ່ຍິງ ໃນການເຮັດວຽກວິຊາການ



ນ ສົມເພັດ ຄຳພາ ອາຍຸ 38 ປີ, ປັດຈຸບັນຢູ່ບ້ານ ທ່ານາ ເມືອງໄຊຍະ, ແຂວງໄຊຍະ, ໜ້າທີ່ຮັບຜິດຊອບວິຊາການລ້ຽງສັດ ແລະ ການປະມົງ, ໂສດ, ຖານະຄອບຄົວປານກາງ.

ປີ 1994-1996 ເປັນວິຊາການລ້ຽງສັດ, ປິ່ນປົວຮັກສາພະຍາດສັດລ້ຽງ ປີ 1997-2002 ເປັນວິຊາການສົ່ງເສີມບົດບາດຍິງ-ຊາຍ, ໂຄງການພັດທະນາປ່າໄມ້ (ປ່າສະຫງວນນ້ຳປຸຍ), ປີ 2002-2006 ຮຽນຕໍ່ວິຊາສະເພາະລ້ຽງສັດ (ປະລິນຍາຕີ) ຢູ່ກະເສດນາບົງ ນະຄອນຫຼວງ, ປີ 2006-2009 ໂຄງການພັດທະນາຊົນນະບົດ 4 ເມືອງພາກໃຕ້ ຮັບພິດຊອບສົ່ງເສີມການລ້ຽງໝູຊຸມ, ປີ 2009 ຫາປັດຈຸບັນຢູ່ໜ່ວຍງານລ້ຽງສັດ, ເປັນຄູຝຶກຜັນຂະຫຍາຍເຕັກນິກການລ້ຽງສັດ, ໄດ້ມີການຍົກລະດັບຄວາມສາມາດວິຊາຊະເພາະດ້ານເຕັກນິກການລ້ຽງໝູຊຸມ, ການນຳໃຊ້ຄອມພິວເຕີ, ຄູຝຶກບົດບາດຍິງ-ຊາຍ, ພາສາອັງກິດ.

ການຈັດຕັ້ງປະຕິບັດວຽກງານຝຶກອົບຮົມເລື່ອງບົດບາດຍິງ-ຊາຍໃຫ້ຊາວບ້ານ ເພື່ອສົ່ງເສີມໃຫ້ເຂົາເຈົ້າມີສ່ວນຮ່ວມໃນການປະຕິບັດວຽກງານນຳພາຊາວບ້ານປະຕິບັດການລ້ຽງໝູຊຸມ, ປິ່ນປົວປ້ອງກັນພະຍາດໝູ, ປູກຫຍ້າອາຫານສັດ, ການໃຫ້ອາຫານ. ລົງຊຸກຍູ້ການລ້ຽງສັດຈຳນວນ 20 ບ້ານ, ເຕັກນິກການລ້ຽງສັດໃຫ້ກັບແຕ່ລະເມືອງ ແລະ ສູນບໍລິການເຕັກນິກ 11 ເມືອງໄດ້ 7 ສູນບໍລິການເຕັກນິກ.



## ປັດໃຈສາເຫດທີ່ອຳນວຍຄວາມສະດວກຂອງຕົນເຮັດໄດ້ດີ

**ພາຍໃນຕົວເອງ:** ຄອບຄົວມີຄວາມຫວັງ ແລະ ສະໜັບສະໜູນການສຶກສາ, ຄວາມອົດທົນສູ້ຊົນຂອງຕົນເອງ

**ການຈັດຕັ້ງທ້ອງການ:** ໃຫ້ຄວາມສຳຄັນແລະພິຈາລະນາຕາມຜົນງານທີ່ໄດ້ປະຕິບັດຕົວຈິງ.

**ຄວາມຄາດຫວັງໃນອະນາຄົດ:** ຍົກລະດັບຄວາມຮູ້ວິຊາສະເພາະດ້ານປະລິນຍາໂທ, ການປະສານງານທີ່ມີປະສິດທິຜົນ, ຢາກໃຫ້ກະຊວງໃຫ້ໂອກາດ ແລະ ໃຫ້ທຶນຮອນໃນການສຶກສາຕໍ່ວິຊາສະເພາະພາຍໃນ ແລະ ຕ່າງປະເທດ, ບຳລຸງພາສາຕ່າງປະເທດ.